ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 1827 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 27-07-2018

# ແຈ້ງການ

ຮຽນ : - ທ່ານ ຫົວໜ້າຫ້ອງການກະຊວງແຜນການ ແລະ ການລົງທຶນ.

- ທ່ານ ຫົວໜ້າຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

**ເລື່ອງ :** ການປ່ຽນປ້າຍທະບຽນພາຫະນະບໍລິຫານ ຂສພ ບໍ່ເຕັ່ນແດນງາມ ແລະ ຂສພ ສາມຫຼ່ຽມຄຳ ໃຫ້ໄປຕາມລະບຽບຫຼັກການລວມ.

- ອີງຕາມ ຂໍ້ຕົກລົງ ສະບັບ ເລກທີ 2929/ກງ, ລົງວັນທີ 31/08/2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການກະຊວງການເງິນ;
- ອີງຕາມ ໜັງສືສະເໜີ ຂອງ ກົມພາສີ ສະບັບເລກທີ 03248/ກພສ, ລົງວັນທີ 21/06/2018;
- ອີງຕາມ ທິດຊີ້ນຳຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຄັ້ງວັນທີ 15/06/2018.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ມາຍັງທ່ານ ຊາບວ່າ: ກ່ຽວກັບການປ່ຽນປ້າຍທະບຽນພາຫະນະບໍລິຫານ ຂສພ ບໍ່ເຕັ່ນແດນງາມ ແລະ ຂສພ ສາມຫຼ່ຽມຄຳ ໃຫ້ໄປຕາມລະບຽບຫຼັກການລວມ, ໃນການປະຕິບັດ ຕາມລະບຽບກົດໝາຍ ແລະ ການຕົກລົງຂອງລັດຖະບານ, ເພື່ອປະຕິບັດທິດຊີ້ນຳ ແລະ ແນະນຳການປະຕິບັດລະບຽບການດັ່ງກ່າວ ເຊິ່ງມີເນື້ອໃນຄື:

1. ດ້ານນິຕິກຳ ແລະ ລະບຽບກົດໝາຍ ໃນການຈັດເກັບພາສີ-ອາກອນ ຈາກການນຳເຂົ້າພາຫະນະບໍລິຫານ ທັງກອບສົ່ງເສີມການລົງທຶນ ແລະ ຈັດຊື້ດ້ວຍງົບປະມານຂອງລັດແມ່ນປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ຄຳສັ່ງ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ 10/ນຍ, ລົງວັນທີ 27/05/2004.
2. ການປະຕິບັດພັນທະພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໂດຍຫຼັກການຕ້ອງມອບເຂົ້າງົບປະມານສູນກາງ ຕາມກົດໝາຍງົບປະມານ ແລະ ກົດໝາຍວ່າດ້ວຍພາສີ.
3. ສຳລັບປະເພດພາຫະນະບໍລິຫານຕ່າງໆ ທີ່ໄດ້ນຳເຂົ້າມາຮັບໃຊ້ໃນເຂດເສດຖະກິດພິເສດ, ຊຶ່ງມີການອະນຸມັດຂອງເຂດເສດຖະກິດພິເສດ, ມີໃບອະນຸຍາດຂອງຂະແໜງການກ່ຽວຂ້ອງ ການຄ້າ ແລະ ເຕັກນິກ, ມີເອກະສານປະກອບການນຳເຂົ້າຢ່າງຄົບຖ້ວນຖືກຕ້ອງ ໂດຍສະເພາະ (ມີໃບແຈ້ງພາສີເປັນລາຍລະອຽດ IM4) ແລະ ພາຫະນະບໍລິຫານຈຳນວນດັ່ງກ່າວ ໄດ້ແຈ້ງຂຶ້ນທະບຽນເຂດເສດຖະກິດພິເສດ, ກ່ອນແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2224/ຜທ, ລົງວັນທີ 12 ກັນຍາ 2016, ທີ່ ສະພາບໍລິຫານເຂດ, ຜູ້ພັດທະນາ ແລະ ຜູ້ລົງທຶນທົ່ວໄປເປັນຜູ້ນຳໃຊ້, ຖ້າຫາກເປັນນະໂຍບາຍພິເສດຕ້ອງການຍົກເວັ້ນພາສີ-ອາກອນ ສະເໜີ ກະຊວງແຜນການແລະ ການລົງທຶນ ຫຼື ລັດຖະບານ ພິຈາລະນາຕົກລົງອະນຸມັດເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.
4. ການນຳເຂົ້າພາຫະນະໃນເຂດເສດຖະກິດພິເສດ ຂອງສະພາບໍລິຫານ, ຜູ້ພັດທະນາ ແລະ ຜູ້ລົງທຶນທົ່ວໄປ ດັ່ງທີ່ກ່າວມາໃນຂໍ້ 3 ເທິງນີ້, ຖ້າຫາກບໍ່ມີການປະກອບເອກະສານການນຳເຂົ້າຢ່າງຄົບຖ້ວນຖືກຕ້ອງ ໂດຍສະເພາະ (ບໍ່ມີໃບແຈ້ງພາສີເປັນລາຍລະອຽດ IM4) ຕ້ອງເສຍພາສີ-ອາກອນ ຕາມລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ

**ບ່ອນສົ່ງ:**

- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ "01 ສະບັບ"
- ທ່ານ ຮອງລັດຖະມົນຕີກະຊວງການເງິນ "01 ສະບັບ"
- ພາກສ່ວນກ່ຽວຂ້ອງ "01 ສະບັບ"
- ເກັບສຳເນົາ "01 ສະບັບ"